**WWF-Laos**
House No. 39, Unit 05
Saylom village, Chanthabouly,
Vientiane Capital, Laos.

P.O. Box: 7871
Tel: +856 21 216080
Fax: +856 21 251883
www.wwflaos.org

| ປົດຂ່າວ | For Immediate Use |
|---|---|

# ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສ້າງຄວາມຫວັງໃໝ່ໃຫ້ສັດປ່າໃນລາວ

**31.05.2018, ນະຄອນຫຼວງວຽງຈັນ, ສປປ ລາວ -- ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບລ່າສຸດວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າ ຫວງຫ້າມ ຈະເປັນບາດກ້າວອັນສຳຄັນຕໍ່ການຢຸດຕິການຄ້າ-ຂາຍສັດປ່າທີ່ຜິດກົດໝາຍ, ການສ້າງຟາມເສືອ ແລະ ຟາມໝີ, ການລ່າສັດ ແລະ ຄ້າ-ຂາຍສັດປ່າປະເພດຫວງຫ້າມ. ກ່າວໂດຍອົງການກອງທຶນອະນຸຮັກທຳມະຊາດໂລກ ຫຼື WWF. ຖ້າຫາກຄຳສັ່ງດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ປະເທດລາວຈະກາຍເປັນຜູ້ນຳໃນລະດັບພາກພື້ນ ຕໍ່ການຢັບຢັ້ງຂະບວນການຄ້າ-ຂາຍສັດປ່າທີ່ມີມູນຄ່າຫຼາຍພັນລ້ານໂດລາ ທີ່ສົ່ງຜົນໃຫ້ສັດຫຼາຍຊະນິດເຊັ່ນ: ເສືອ, ຊ້າງ, ລິ່ນ ແລະ ໝີ ສູນພັນໄດ້.**

ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 05/ນຍ ລົງວັນທີ 8 ພຶດສະພາ 2018 ແຈ້ງເຖິງບັນດາລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ທົ່ວປະເທດລາວ ໃຫ້ເພີ່ມທະວີຄວາມເຂັ້ມງວດຕໍ່ການຈັດຕັ້ງປະຕິບັດວຽກງານບັງຄັບໃຊ້ກົດໝາຍວ່າດ້ວຍການການຄຸ້ມຄອງ ແລະ ກວດກາການຄ້າ-ຂາຍສັດປ່າ ເພື່ອໃຫ້ສອດຄ່ອງກັບກົດໝາຍພາຍໃນປະເທດ ແລະ ສົນທິສັນຍາສາກົນ.

"WWF-Laos ຂໍຊົມເຊີຍລັດຖະບານລາວທີ່ຈະສຸມໃສ່ການແກ້ໄຂບັນຫາການຄ້າ-ຂາຍສັດປ່າທີ່ຜິດກົດໝາຍ ທີ່ເປັນໄພຂົ່ມຂູ່ໃຫ້ແກ່ສັດປ່າ ໂດຍສະເພາະຊະນິດພັນທີ່ໃກ້ສູນພັນເຊັ່ນ: ເສືອ, ຊ້າງ, ໝີ ແລະ ລິ່ນ, ກ່າວໂດຍ ທ່ານ ສົມພອນ ບົວສະຫວັນ, ຫົວໜ້າອົງການ WWF-Laos. "ນີ້ເປັນໂອກາດອັນສຳຄັນຂອງ ສປປ ລາວ ທີ່ຈະສະແດງ ອອກໃນຂັ້ນພາກພື້ນ ໃນການຕໍ່ຕ້ານການຄ້າ-ຂາຍສັດປ່າທີ່ຜິດກົດໝາຍ ແລະ ເພື່ອເຮັດໃຫ້ສັດປ່າໃນ ສປປ ລາວໄດ້ຮັບການຄຸ້ມຄອງ. ຖ້າຄຳສັ່ງດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຈາກທຸກພາກສ່ວນ, ມັນຈະກາຍເປັນບາດກ້າວອັນສຳຄັນໃຫ້ແກ່ການອະນຸຮັກສັດປ່າ ແລະ ອົງການ WWF ກໍ່ພ້ອມທີ່ຈະໃຫ້ການ ສະໜັບສະໜູນດ້ານວິຊາການໃຫ້ແກ່ລັດຖະບານແຫ່ງ ສປປ ລາວ”

ຄຳສັ່ງດັ່ງກ່າວຍັງໄດ້ເນັ້ນໃຫ້ບັນດາທຸກພາກສ່ວນທີ່ກ່ຽວຂ້ອງຕໍ່ການບັງຄັບໃຊ້ກົດໝາຍເພື່ອຢຸດຕິການລ່າສັດປ່າທຸກປະເພດ, ການນຳເຂົ້າ-ສົ່ງອອກ, ການນຳຜ່ານ ແລະ ການຄ້າຂາຍສິ້ນສ່ວນສັດປ່າ ທີ່ຫວງຫ້າມ ແລະ ໃຫ້ຢຸດຕິການສ້າງ ຟາມສັດປ່າ ແລະ ຟາມທີ່ມີຢູ່ແລ້ວໃຫ້ຫັນໄປສູ່ການລ້ຽງແບບຟາມເປີດ ຫຼື ສວນສັດ ເພື່ອການອະນຸຮັກ, ການທ່ອງທ່ຽວ ແລະ ການຄົ້ນຄວ້າທາງວິທະຍາສາດເທົ່ານັ້ນ.

ພ້ອມດຽວກັນນັ້ນຍັງເນັ້ນໃຫ້ກະຊວງກະສິກຳ ແລະ ປ່າໄມ້ສົມທົບກັບກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການ ສຳຫຼວດ, ຂຶ້ນບັນຊີສັດປ່າ ແລະ ຜະລິດຕະພັນທຸກຢ່າງທີ່ເຮັດຈາກຊິ້ນສ່ວນສັດປ່າ ທີ່ບຸກຄົນ ແລະ ການຈັດຕັ້ງມີໄວ້ ຄອບຄອງ. ຜະລິດຕະພັນງາຊ້າງ, ກະດູກ ແລະ ນໍແຮດ ທີ່ລອກຮຽນແບບ ລວມທັງອາວຸດລ່າສັດທີ່ໃຊ້ໃນການລ່າ ສັດປ່າຈະຕ້ອງຖືກຍຶດ ແລະ ທຳລາຍຖິ້ມ.

ຄຳສັ່ງດັ່ງກ່າວຍັງໃຫ້ບັນດາເຈົ້າໜ້າທີ່ ເຂັ້ມງວດໃນການກວດກາ ແລະ ລາດຕະເວນຕາມເຂດທີ່ຫຼໍ່ແຫຼມ, ດ່ານຂາເຂົ້າ-ຂາອອກ, ເຂດເສດຖະກິດພິເສດ ແລະ ເຂດອື່ນໆ ຜູ້ກະທຳຜິດກ່ຽວກັບການຂ້າຂາຍ, ເຄື່ອນຍ້າຍສັດປ່າ ຈະຖືກດຳເນີນການສືບສວນ-ສອບສວນ ແລະ ດຳເນີນຄະດີ. ພ້ອມດຽວກັນນັ້ນ, ຄຳສັ່ງຍັງໃຫ້ມີການຢຸດຕິການນຳເຂົ້າສັດປ່າໃນດ່ານພາສີສາກົນ ແລະ ຕາມເຂດຊາຍແດນ.

ໃຫ້ບັນດາກະຊວງດຳເນີນການກວດກາ, ຂຶ້ນບັນຊີ ແລະ ຢຸດຕິການຄ້າຂາຍສິ້ນສ່ວນສັດປ່າ ລວມມີ ກະດູກ, ໜັງ, ນໍ, ງາ, ນໍແຮດ, ປີ, ແຂ້ວ, ເລັບ ແລະ ອື່ນໆ, ແລະ ຜະລິດຕະພັນ ແລະ ຂອງທີ່ລະນຶກທີ່ເຮັດ ມາຈາກສິ້ນສ່ວນສັດປ່າທຸກປະເພດ ຢູ່ບັນດາຕະຫຼາດ, ໂຮງແຮມ, ເຂດເສດຖະກິດພິເສດ, ສະຖານທີ່ທ່ອງທ່ຽວ, ສະໜາມບິນ, ດ່ານຂາເຂົ້າ-ຂາອອກ ແລະ ສະຖານທີ່ອື່ນໆ."

ໃນປັດຈຸບັນ, ອົງການ WWF ໄດ້ສະໜັບສະໜູນແຜນງານການຕໍ່ຕ້ານການຄ້າຂາຍສັດປ່າ ໃນພາກພື້ນແມ່ນ້ຳຂອງ, ລວມທັງ ສປປ ລາວ ເຊິ່ງການລ່າສັດປ່າ ແລະ ການຄ້າສັດປ່າແບບຜິດກົດໝາຍ ສົ່ງຜົນໃຫ້ມີການຫຼຸດລົງຂອງປະຊາກອນຂອງສັດທີ່ໃກ້ຈະສູນ. ຈຸດປະສົງລວມຂອງແຜນງານນີ້ກໍ່ເພື່ອຫຼຸດຜ່ອນຄວາມຕ້ອງການຂອງຜະລິດຕະພັນທີ່ເຮັດມາຈາກສັດປ່າ, ແລະ ສະໜັບສະໜູນການປັບປຸງຄວາມອາດສາມາດຂອງໜ່ວຍງານລາດຕະເວນ ແລະ ກິດຈະກຳການບັງຄັບໃຊ້ກົດໝາຍສັດປ່າ ແລະ ກິດຈະກຳສ້າງຄວາມອາດສາມາດໃຫ້ກັບກົມກວດກາປ່າໄມ້ ແລະ ພະແນກທີ່ກ່ຽວຂ້ອງຂັ້ນແຂວງ.

"ການຈັດຕັ້ງປະຕິບັດຄຳສັ່ງໃຫ້ເຂັ້ມງວດໃນຄັ້ງນີ້ຈະສົ່ງຜົນດ້ານດີໃຫ້ກັບສັດປ່າພາຍໃນປະເທດ ແລະ ນອກປະເທດ, ແລະ ຈະເຮັດໃຫ້ ສປປ ລາວເປັນຕົວຢ່າງໃນການແກ້ໄຂບັນຫາການຄ້າສັດປ່າທີ່ຜິດກົດໝາຍຢ່າງຈິງຈັງ." ກ່າວໂດຍທ່ານ ສົມພອນ ບົວສະຫວັນ. "ອົງການ WWF-Laos ກຽມພ້ອມທີ່ຈະສະໜັບສະໜູນລັດຖະບານໃນການຈັດຕັ້ງປະຕິບັດກົດໝາຍ ແລະ ຂໍ້ຫ້າມວ່າດ້ວຍສັດປ່າໃນຄັ້ງນີ້."

**For more information, please contact:**
Bounpone Sookmexay, WWF-Laos Communication Officer,
bounpone.sookmexay@wwfgreatermekong.org